ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-04 ພຶດສະພາ 2022
ປີທີ 11
ສະບັບທີ 840

## ປະທານ ສພຊ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງລັດຖະມົນຕີກະຊວງການຕ່າງປະເທດ ສສ.ຫວຽດນາມ



(ສພຊ) ວັນທີ 28 ເມສາ ຜ່ານມາ, ທີ່ຫ້ອງຮັບແຂກສະພາແຫ່ງຊາດ ສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ບຸຍ ແທັງ ເຊີນ ລັດຖະມົນຕີກະຊວງການຕ່າງປະເທດ ສສ.ຫວຽດນາມ. ໃນໂອກາດທີ່ເດີນທາງມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ ແລະ ເຂົ້າຮ່ວມກອງປະຊຸມປຶກສາຫາລືດ້ານການເມືອງຂັ້ນລັດຖະມົນຕີ ຄັ້ງທີ 9 ລະຫວ່າງວັນທີ 27-29 ເມສາ 2022.

ໂອກາດດັ່ງກ່າວ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວຄວາມປິຕິຊົມຊື່ນ ແລະ ຮູ້ສຶກດີໃຈທີ່ໄດ້ຕ້ອນຮັບສະຫາຍ ບຸຍ ແທັງ ເຊີນ ພ້ອມດ້ວຍຄະນະ ໃນການມາຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ຝາກຄວາມຢື້ຢາມຖາມຂ່າວໄປຍັງສະຫາຍປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ເວືອງ ດິງ ເຫວະ ແລະ ບັນດາສະຫາຍການນຳຂອງຫວຽດນາມ ແລະ ຄອງຄອຍທີ່ຈະໄດ້ຕ້ອນຮັບ ແລະ ເຮັດວຽກກັບສະຫາຍໃນເດືອນພຶດສະພາທີ່ຈະມາເຖິງນີ້.

ສະຫາຍໄດ້ຕີລາຄາສູງຕໍ່ການເດີນທາງມາຢ້ຽມຢາມ ສປປລາວ ຢ່າງເປັນທາງການໃນຄັ້ງນີ້ ນອກຈາກເປັນການຢ້ຽມຢາມຕາມປະເພນີ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່ ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ແລ້ວ, ຍັງເປັນກິດຈະກຳໜຶ່ງປະກອບສ່ວນເຮັດໃຫ້ການສະເຫລີມສະຫລອງ ປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ກໍຄືວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ ຄົບຮອບ 45 ປີ ໃຫ້ມີເນື້ອໃນ ແລະ ຄວາມໝາຍຍິ່ງຂຶ້ນ; ພ້ອມກັນນັ້ນ, ຍັງໄດ້ສະແດງຄວາມຍິນດີ ແລະ ຊົມເຊີຍນຳສະຫາຍຫວຽດນາມ ທີ່ສາມາດຄວບຄຸມການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ແລະ ເປີດຄືນປະເທດໂດຍຫລຸດຜ່ອນຂັ້ນຕອນການເຂົ້າ-ອອກເມືອງໃຫ້ສະດວກສະບາຍ; ຊົມເຊີຍສອງຂະແໜງການຕ່າງປະເທດ ທີ່ໄດ້ເຮັດວຽກຢ່າງໜັກໜ່ວງ ເພື່ອເປັນເສນາທິການ ແລະ ກະກຽມໃຫ້ແກ່ການພົບປະຂອງການນຳຂັ້ນສູງ

ອ່ານຕໍ່ໜ້າ 2

## ປະທານ ສພຊ ເຄື່ອນໄຫວຢ້ຽມຢາມ ເຂດພັດທະນາໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ



ໜ້າ 3

## ກວດກາເນື້ອໃນຮອບດ້ານຮ່າງກົດໝາຍ ວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ)



(ສພຊ) ເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີຄວາມກຽມພ້ອມໃນລະດັບທີ່ແນ່ນອນ; ກຳມາທິການກົດໝາຍ ສົມທົບກັບກຳມາທິການແຜນການ, ການເງິນ ແລະ ການກວດສອບ ແລະ ກະ

ອ່ານຕໍ່ໜ້າ 2

## ຮັບຮູ້, ເຂົ້າໃຈ ເປັນເອກະພາບ ໃນການຈັດຕັ້ງປະຕິບັດ

ເມື່ອເວົ້າເຖິງວາລະແຫ່ງຊາດ ທັງສອງສະບັບຄື: ວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກ ດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດນັ້ນ ຈະຕ້ອງກຳໃຫ້ແໜ້ນ ມະຕິເລກທີ 03 ແລະ 04 ຂອງສະພາແຫ່ງຊາດ ລົງວັນທີ 10 ສິງຫາ 2022.

ສຳລັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນນັ້ນ ລວມມີ 6 ມາດຕາ ເຊິ່ງຈຸດສຳຄັນແມ່ນໄດ້ມີການກຳນົດເວລາແຕ່ໄລຍະປີ 2021-2023 ແລະ ສິ່ງທີ່ຕ້ອງຮັບຮູ້-ເຂົ້າໃຈ ທັງກຳແໜ້ນແມ່ນມາດຕາ 4 ຮັບຮອງເອົາມາດຕາການຈັ້ດຕັ້ງປະຕິບັດມີທັງໝົດ 14 ຂໍ້ ດັ່ງນີ້: ມາດຕາ 4 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດກອງປະຊຸມຮັບຮອງເອົາມາດຕະການຕາມການສະເໜີຂອງລັດຖະບານຕາມຄຳເຫັນຂອງກອງປະຊຸມ ດັ່ງນີ້:

ອ່ານຕໍ່ໜ້າ 3

## ສຳເລັດການທາບທາມປັບປຸງຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ




(ສພຊ) ກອງປະຊຸມສະຫລຸບຕີລາຄາການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ ແລະ ການທາບທາມປັບປຸງຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ຂອງກຳມາທິການຍຸຕິທຳ (ກມຍທ) ສະພາແຫ່ງຊາດ ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນວັນທີ 23 ເມສາຜ່ານມາ, ພາຍຫລັງດຳເນີນມາເປັນເວລາ 2 ວັນ (ວັນທີ 22-23 ເມສາ 2022) ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ; ເຂົ້າຮ່ວມມີທ່ານ ສຈ. ປອ ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ປະທານກຳມາທິການກົດໝາຍ ທັງເປັນຜູ້ຊີ້ນຳວຽກງານກຳມາທິການຍຸຕິທຳ; ມີບັນດາທ່ານຄະນະຮັບຜິດຊອບປັບປຸງກົດໝາຍ, ຮອງປະທານກຳມາທິການ, ຮອງລັດຖະມົນຕີ, ຮອງຫົວໜ້າອົງການ, ຮອງປະທານສານປະຊາຊົນສູງສຸດ, ປະທານ ແລະ

ອ່ານຕໍ່ໜ້າ 3



ໜ້າ 4

ທະນາຄານພັດທະນາລາວ
LDB Bank

ໜ້າ 7



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5

## ປະທານ...

ສອງປະເທດຕະຫລອດມາ, ເຮັດໃຫ້ການພົວພັນສອງຝ່າຍ ນັບມື້ນັບຂະຫຍາຍຕົວ ແລະ ປາກົດຜົນເປັນຈິງ, ຮ່ວມກັນຈັດຕັ້ງສະເຫລີມສະຫລອງປີສາມັກຄີມິດຕະພາບ ໃນປີ 2022 ໃຫ້ມີບັນຍາກາດຟົດຟື້ນ, ເຕັມໄປດ້ວຍເນື້ອໃນ ແລະ ຄວາມໝາຍ ເພື່ອໃຫ້ຄົນຮຸ່ນໜຸ່ມ ທີ່ເປັນຜູ້ສືບທອດໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ສາຍພົວພັນພິເສດສອງປະເທດ.

ພ້ອມນີ້, ສະຫາຍ ຍັງໄດ້ສະແດງຄວາມຂອບໃຈມາຍັງພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງທີ່ໄດ້ໃຫ້ການຊ່ວຍເຫລືອອັນລ້ຳຄ່າ ແລະ ທັນການ ຕໍ່ ສປປລາວ ຕະຫລອດມາ ບໍ່ວ່າໃນໄລຍະຕໍ່ສູ້ກູ້ຊາດ, ໄລຍະສ້າງສາພັດທະນາປະເທດຊາດໃນປັດຈຸບັນ ກໍຄືເວລາປະສົບກັບໄພພິບັດ ແລະ ການແຜ່ລະບາດຂອງພະຍາດໂຄວິດ-19, ກໍໄດ້ບໍແບ່ງການຊ່ວຍເຫລືອ ໂດຍໄດ້ສົ່ງທີມຊ່ຽວຊານແພດ, ຢາວັກຊີນ ແລະ ຢາປົວພະຍາດ ມາຊ່ວຍເຫລືອລັດຖະບານລາວ ໃນການສະກັດກັ້ນ ແລະ ຕ້ານການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ຢູ່ ສປປລາວ.

ໃນຕອນທ້າຍ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍ ຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງສະຫາຍ ແລະ ຄະນະ ທີ່ ສປປລາວ ໃນຄັ້ງນີ້ ແລະ ເຊື່ອໝັ້ນວ່າໝາກຜົນຂອງການຢ້ຽມຢາມໃນຄັ້ງນີ້ ຈະເປັນການປະກອບສ່ວນອັນສຳຄັນໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ທີ່ຫາຍາກໃນການພົວພັນສາກົນນີ້ ໃຫ້ຈະເລີນງອກງາມຕະຫລອດໄປ ແລະ ຖ່າຍທອດ ໃຫ້ແກ່ຮຸ່ນລູກຮຸ່ນຫລານຂອງພວກເຮົາໄດ້ສືບທອດຕໍ່ໄປ.

ຈາກນັ້ນ, ສະຫາຍ ບຸຍແທັງ ເຊີນ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ສະຫາຍ ປອ. ໄຊສົມພອນ ພົມວິຫານ ທີ່ໄດ້ເສຍສະຫລະເວລາຕ້ອນຮັບຢ່າງອົບອຸ່ນ ພ້ອມທັງລາຍງານໃຫ້ຮູ້ກ່ຽວກັບຈຸດປະສົງຂອງການມາຢ້ຽມຢາມ ແລະ ພົບປະເຮັດວຽກຢູ່ ສປປລາວ ໃນຄັ້ງນີ້.

(ສອນສັກ ວັນວິໄຊ)






## ສໍາເລັດ...

ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ບັນດາທ່ານອະດີດການນໍາ, ຕາງໜ້າຈາກສໍານັກງານ, ອົງການອ້ອມຂ້າງສູນກາງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ທັງນີ້, ເພື່ອເປັນການສະຫລຸບຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບການຄົ້ນຄວ້າ, ພິຈາລະນາຮ້ອງຂໍຄວາມເປັນທໍາໃນໄລຍະຜ່ານມາ ແລະ ທິດທາງກົນໄກການພິຈາລະນາຄໍາຮ້ອງຂໍຄວາມເປັນທໍາໃນຕໍ່ໜ້າ; ສ້າງຄວາມເປັນເອກະພາບໃນການປະຕິບັດພາລະບົດຂອງພາກສ່ວນກ່ຽວຂ້ອງໃນການຄົ້ນຄວ້າ, ພິຈາລະນາຄໍາຮ້ອງທຸກໃຫ້ມີຄວາມສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ເພື່ອກວດກາຄືນເນື້ອໃນຮອບດ້ານ ຂອງຮ່າງປັບປຸງກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກກ່ອນນໍາເຂົ້າສູ່ກອງປະຊຸມສະໄໝສາມັນເທື່ອທີ່ 3 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະມາເຖິງນີ້.

ກອງປະຊຸມຄັ້ງນີ້, ຜູ້ເຂົ້າຮ່ວມໄດ້ຮັບຟັງການນໍາສະເໜີບົດຮຽນກ່ຽວກັບການຮັບ ແລະ ພິຈາລະນາຄໍາຮ້ອງຂໍຄວາມເປັນທໍາ ຂອງກໍາມາທິການຍຸຕິທໍາ ໃນໄລຍະຜ່ານມາ ແລະ ເພື່ອເປັນການປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ແລະ ທິດທາງໃນຕໍ່ໜ້າຄວນຈະມີການປັບປຸງ ຫລື ກໍານົດອັນໃດເຂົ້າຕື່ມຈຶ່ງຈະຖືກຕ້ອງແລະແທດເໝາະກັບສະພາບຕົວຈິ່ງໃນປັດຈຸບັນ; ການສະເໜີບົດຮຽນກ່ຽວກັບການຕິດຕາມກວດກາຂອງລັດຖະສະພາຕ່າງປະເທດ ໃນຂົງເຂດວຽກງານຍຸຕິທໍາ ເພື່ອເປັນການຖອດຖອນ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ.

ພ້ອມນັ້ນ, ກອງປະຊຸມ ໄດ້ມີຄວາມເປັນເອກະພາບຕໍ່ບົດສະຫລຸບຕີລາຄາການຮັບ ແລະ ພິຈາລະນາຄໍາຮ້ອງຂໍຄວາມເປັນທໍາ, ຕີລາຄາຢ່າງກົງໄປກົງມາຕໍ່ສະພາບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ ທີ່ພົວພັນເຖິງການຮັບ ແລະ ພິຈາລະນາຄໍາຮ້ອງຂໍຄວາມເປັນທໍາ ຂອງຄະນະປະຈໍາສະພາແຫ່ງຊາດ ໃນໄລຍະຜ່ານມາ ອັນໄດ້ເຮັດໃຫ້ການປະຕິບັດພາລະບົດບາດຕິດຕາມກວດກາຂອງຄະນະປະຈໍາສະພາແຫ່ງຊາດ ມີປະສິດທິຜົນ ເຊິ່ງເປັນການປະກອບສ່ວນເຮັດໃຫ້ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ຂອງບັນດາອົງການດໍາເນີນຄະດີຕາມຂະບວນຍຸຕິທໍາ ສາມາດເຄື່ອນໄຫວຖືກຕ້ອງຕາມລັດຖະທໍາມະນູນ ແລະ ກົດໝາຍກໍານົດໄວ້ໄດ້ເປັນຢ່າງດີ, ພ້ອມນັ້ນ, ຍັງສາມາດຮັບປະກັນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ທີ່ເຂົ້າສູ່ຂະບວນການດໍາເນີນຄະດີຕາມຂະບວນການຍຸຕິທໍາ ໄດ້ຢ່າງມີປະສິດທິຜົນ.

ໃນຕອນທ້າຍ, ທ່ານ ຄໍາແພງ ວິລະພັນ ໄດ້ກ່າວປິດກອງປະຊຸມວ່າ: ຂ້າພະເຈົ້າຕີລາຄາສູງຕໍ່ຄວາມຮັບຜິດຊອບ ແລະ ຄວາມພະຍາຍາມຂອງບັນດາທ່ານ ທີ່ໄດ້ເອົາໃຈໃສ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ເຖິງວ່າພວກເຮົາມີເວລາຈໍາກັດ ແຕ່ກອງປະຊຸມກໍໄດ້ມີການຄົ້ນຄວ້າ, ວິເຄາະ, ວິໄຈ ຢ່າງເລິກເຊິ່ງ ປະກອບຄໍາຄິດຄໍາເຫັນດ້ວຍເຫດຜົນ, ລວມທັງບົດຮຽນ ແລະ ປະສົບການຕົວຈິງ ຂອງແຕ່ລະທ່ານ ເຊິ່ງເຮັດໃຫ້ສາມາດສັງລວມໄດ້ເນື້ອໃນທີ່ສໍາຄັນອັນຈໍາເປັນ ແນ່ໃສ່ເຮັດໃຫ້ແນວທາງນະໂຍບາຍຂອງພັກ ໄດ້ຮັບການຈັດຕັ້ງຜັນຂະຫຍາຍເຂົ້າສູ່ລວງເລິກໃຫ້ຫລາຍຂຶ້ນ; ພາຍຫລັງສໍາເລັດກອງປະຊຸມ ໃນນາມຕາງໜ້າໃຫ້ຄະນະຮັບຜິດຊອບ ຈະນໍາເອົາຄໍາຄິດຄໍາເຫັນຂອງກອງປະຊຸມ ໄປສືບຕໍ່ຄົ້ນຄວ້າປັບປຸງ ໃຫ້ມີເນື້ອໃນຄົບຖ້ວນ ແລະ ຮັດກຸມຂຶ້ນກວ່າເກົ່າ.

(ສອນສັກ ວັນວິໄຊ)

## ກວດກາ...

ຊວງການເງິນ ໄດ້ຈັດກອງປະຊຸມກວດກາເນື້ອໃນຮອບດ້ານ ເພື່ອຄົ້ນຄວ້າພິຈາລະນາເນື້ອໃນໃຫ້ສອດຄ່ອງກັບກົດໝາຍ ແລະ ການຈັດຕັ້ງປະຕິບັດວຽກງານຕົວຈິງໃນປັດຈຸບັນ.

ກອງປະຊຸມດັ່ງກ່າວ ຈັດຂຶ້ນໃນວັນທີ 30 ເມສາ 2022 ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ມີທ່ານ ດາວອນ ຫວ່າງວິຈິດ ຄະນະທີ່ປຶກສາທາງດ້ານກົດໝາຍ, ບັນດາທ່ານຮອງປະທານກໍາມາທິການ, ຮອງລັດຖະມົນຕີ, ຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ ແລະ ວິຊາການຂອງສະພາແຫ່ງຊາດ, ກະຊວງການເງິນ, ກະຊວງຍຸຕິທໍາ, ຫ້ອງວ່າການປະທານປະເທດ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນວາລະກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າປຶກສາຫາລືເນື້ອໃນຂອງແຕ່ລະມາດແທ້ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ ຢ່າງລະອຽດ ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍດັ່ງກ່າວ ມີຄວາມຖືກຕ້ອງ, ສອດຄ່ອງກັບສະພາບການຕົວຈິງ.

(ນາງ ປາກາລັກ ພົມມີໄຊ)

## ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ຫອມສະນິດ**

*❑ ຜ່ານການສໍາຫລວດຂອງກະຊວງສາທາລະນະສຸກ ແລະ ອົງການອຸຍນີເຊັບ ສະແດງໃຫ້ເຫັນວ່າ: ອັດຕາການສັກວັກຊີນໃນພື້ນທີ່ທ່ອງທ່ຽວສີຂຽວ ເຊິ່ງປະກອບມີ ນະຄອນຫລວງວຽງຈັນ, ແຂວງວຽງຈັນ ແລະ ແຂວງຫລວງພະບາງ, ໄດ້ບັນລຸເຖິງ 99,67%. ໃນນັ້ນ, ລວມທັງປະຊາຊົນທີ່ອາໄສຢູ່ໃນເຂດດັ່ງກ່າວ ເຊິ່ງການສໍາຫລວດໄດ້ຈັດຂຶ້ນລະຫວ່າງເດືອນມັງກອນ ຫາມີນາ 2022 ນອກນັ້ນ, ການສໍາຫລວດຍັງໄດ້ສະແດງໃຫ້ເຫັນວ່າປະຊາຊົນທີ່ອາໄສຢູ່ໃນເຂດດັ່ງກ່າວ ມີຄວາມຮູ້ກ່ຽວກັບມາດຕະການປ້ອງກັນພະຍາດໂຄວິດ-19 ໃນລະດັບສູງພຽງພໍ ໂດຍມາດຕະການປ້ອງກັນທີ່ຜູ້ເຂົ້າຮ່ວມການສໍາຫລວດໄດ້ກ່າວມານັ້ນລວມມີການຫລີກເວັ້ນການຈັບມື (85%), ການໃສ່ຜ້າອັດປາກ-ດັງ (58,9%), ການໝັ່ນລ້າງມືເປັນປະຈໍາ (18,2%) ແລະ ການຫລີກລ່ຽງການດື່ມເຫລົ້າ (16,5%) ພ້ອມນັ້ນ, ການສໍາຫລວດຍັງຊີ້ໃຫ້ເຫັນແຫລ່ງຂໍ້ມູນຂ່າວສານກ່ຽວກັບພະຍາດໂຄວິດ-19 ທີ່ປະຊາຊົນລາວນໍາໃຊ້ ໂດຍຜູ້ເຂົ້າຮ່ວມສ່ວນໃຫຍ່ (85%) ແມ່ນນໍາໃຊ້ເຟສບຸກໃນການເສບຂ່າວສານກ່ຽວກັບໂຄວິດ-19 ແລະ 78,7% ໄດ້ຮັບຂ່າວສານກ່ຽວກັບໂຄວິດ-19 ຈາກບ່ອນເຮັດວຽກ, ເພື່ອນຮ່ວມງານ ແລະ 41,3% ແມ່ນໄດ້ຮັບຂ່າວຈາກໂທລະໂຄ່ງບ້ານ.*

***ນສພ. ປະເທດລາວ 28/04/2022***

*❑ ສປປລາວ ໄດ້ເຂົ້າເປັນສະມາຊິກຂອງອົງການແຮງງານສາກົນໃນປີ 1964 ຕະຫລອດໄລຍະຜ່ານມາ, ສປປລາວ ໄດ້ເອົາໃຈໃສ່ແກ້ໄຂຫລາຍບັນຫາສໍາຄັນກ່ຽວກັບແຮງງານ ເພື່ອສົ່ງເສີມວຽກທີ່ມີຄຸນຄ່າ ແລະ ເປັນທໍາ ໂດຍເນັ້ນໃສ່ການເຮັດວຽກຕາມກົນໄກຮ່ວມມືສາມຝ່າຍໃນການສ້າງກົດໝາຍວ່າດ້ວຍແຮງງານ, ກົດໝາຍວ່າດ້ວຍການປະກັນສັງຄົມ, ດໍາລັດວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ລະບຽບການຕ່າງໆ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ. ມາຮອດປັດຈຸບັນ, ສປປລາວ ໄດ້ໃຫ້ສັດຕະຍາບັນແກ່ສົນທິສັນຍາແຮງງານສາກົນ ທັງໝົດ 10 ສະບັບ; ໃນນັ້ນ, ມີ 5 ສົນທິສັນຍາທີ່ເປັນພື້ນຖານ.*

***ນສພ. ປະເທດລາວ 29/04/2022***

*❑ ສປປລາວ ແມ່ນຈະເປີດຕ້ອນຮັບນັກທ່ອງທ່ຽວທຸກຮູບແບບ (ບໍ່ວ່ານັກທ່ອງທ່ຽວມາໂດຍຜ່ານການບໍລິການຂອງບໍລິສັດທ່ອງທ່ຽວ ແລະ ນັກທ່ອງທ່ຽວທີ່ເດີນທາງມາທ່ຽວດ້ວຍຕົນເອງ) ແຕ່ຕ້ອງມີໃບຢັ້ງຢືນການສັກວັກຊີນຄົບ 2 ເຂັມ ບໍ່ຫລຸດ 14 ວັນ ກ່ອນມື້ອອກເດີນທາງ ຫລື ມີໃບຢັ້ງຢືນການເຄີຍຕິດເຊື້ອໂຄວິດ-19 (ຍົກເວັ້ນຜູ້ເດີນທາງທີ່ມີອາຍຸຕໍ່າກວ່າ 18 ປີ ບໍ່ຈໍາເປັນມີໃບຢັ້ງຢືນການສັກຢາ), ສໍາລັບນັກທ່ອງທ່ຽວທີ່ມີໃບຢັ້ງຢືນການສັກວັກຊີນຄົບ ແລະ ເດັກນ້ອຍອາຍຸຕໍ່າກວ່າ 5 ປີ ຈະບໍ່ໄດ້ມີການກວດ RT-PCR ກ່ອນການເດີນທາງເຂົ້າ ສປປລາວ, ສ່ວນຜູ້ທີ່ບໍ່ທັນມີໃບຢັ້ງຢືນສັກວັກຊີນຄົບ ແມ່ນໃຫ້ມີໃບຢັ້ງຢືນການກວດ RT-PCR ກ່ອນການເດີນທາງ 72 ຊົ່ວໂມງ ເມື່ອເດີນທາງມາຮອດ ສປປລາວ ທຸກຄົນຕ້ອງໄດ້ກວດຫາເຊື້ອດ້ວຍເຄື່ອງ RDTATK ຖ້າຜົນກວດເປັນລົບແມ່ນອະນຸຍາດໃຫ້ເຄື່ອນໄຫວຕາມແຜນການໄດ້; ສະເພາະນັກທ່ອງທ່ຽວຊາຍແດນມາທ່ອງທ່ຽວຕອນເຊົ້າເດີນທາງກັບຕອນແລງ (1 day tripper) ແມ່ນຕ້ອງມີໃບຢັ້ງຢືນການສັກວັກຊີນ ແລະ ຕ້ອງໄດ້ກວດຫາເຊື້ອດ້ວຍລະບົບ RDTIATK; ສ່ວນຜູ້ທີ່ບໍ່ມີໃບຢັ້ງຢືນສັກວັກຊີນຕ້ອງໄດ້ກວດຫາເຊື້ອດ້ວຍລະບົບ RT-PCR ທີ່ມີຜົນເປັນລົບ (ບໍ່ມີເຊື້ອ) ພາຍໃນ 48 ຊົ່ວໂມງ ກ່ອນເດີນທາງເຂົ້າມາ ສປປລາວ.*

***ນສພ. ປະເທດລາວ 29/04/2022***



## ປະທານ...

(ສພຊ) ວັນທີ 3 ພຶດສະພາ 2022 ທ່ານ ປອ. ໄຊສົມພອນ ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມບໍລິສັດວັງຕັດຂຸດຄົ້ນບໍ່ແຮ່ ຈຳກັດ ແຂວງອັດຕະປື ໂດຍການຕ້ອນຮັບຂອງທ່ານ ທ່ານ ບຸຍ ແອັງ ດຶກ ຮອງອຳນວຍການໃຫ່ຍຜູ້ປະຈຳການພາກສະໜາມຂອງກຸ່ມບໍລິສັດວັງຕັດ ຂຸດຄົ້ນບໍ່ແຮ່ຈຳກັດ ພ້ອມດ້ວຍຄະນະ.

ໃນໂອກາດນີ້, ທ່ານຮອງອຳນວຍການໃຫ່ຍຜູ້ປະຈຳການພາກສະໜາມຂອງກຸ່ມບໍລິສັດວັງຕັດ ຂຸດຄົ້ນບໍ່ແຮ່ຈຳກັດ ໄດ້ລາຍງານໃຫ້ຮູ້ວ່າ: ບໍລິສັດໄດ້ສ້າງຕັ້ງຂຶ້ນໃນປີ 2009 ຢູ່ເຂດບ້ານວັງຕັດໃຫຍ່ ບ້ານປຽງດາກ ເມືອງຊານໄຊ ແຂວງອັດຕະປື ໄດ້ດຳເນີນໂຄງການຊອກຄົ້ນ, ສຳຫລວດ ແລະ ຂຸດຄົ້ນແຮ່ທາດທີ່ເຂດຈຸດສຸມວັງຕັດ ເມືອງຊານໄຊ ແລະ ໃນເນື້ອທີ່ຈຳນວນໜຶ່ງທີ່ເຂດດາກລຸກເມືອງດາກຈຶງ ແຂວງເຊກອງ. ປັດຈຸບັນເນື້ອທີ່ຊອກຄົ້ນ, ສຳຫລວດທັງໝົດມີ 399,1 ກິໂລຕາແມັດ ແລະ ເນື້ອທີ່ທີ່ໄດ້ຮັບອະນຸຍາດຂຸດຄົ້ນມີພຽງ 18 ກິໂລຕາແມັດ, ໂຄງການດັ່ງກ່າວ ນອນໃນເຂດພູມສັນຖານເນີນພູ, ສະພາບທາງດ້ານອາກາດແບ່ງອອກເປັນ 2ໄລຍະຄື: ລະດູແລ້ງ ແລະ ລະດູຝົນ, ເງື່ອນໄຂທາງດ້ານເສດຖະກິດ-ສັງຄົມໃນພື້ນທີ່ແມ່ນພົບຄວາມຍຸ້ງຍາກແລະລະບົບພື້ນຖານໂຄງລ່າງແມ່ນຍັງບໍ່ທັນໄດ້ຮັບການພັດທະນາ, ປີຜ່ານມາ, ບໍລິສັດໄດ້ສຸມໃສ່ການສຳຫລວດເປີດກວ້າງເນື້ອທີ່ທີ່ໄດ້ຮັບອະນຸຍາດຊອກຄົ້ນ-ສຳຫລວດ ແລະ ສຸມໃສ່ການສຳຫລວດເລິກໃນບັນດາພື້ນທີ່ທີ່ໄດ້ຮັບອະນຸຍາດການຂຸດຄົ້ນເພື່ອແນໃສ່ປະເມີນລາຄາທີ່ແນ່ນອນທາງດ້ານຄຸນນະພາບ ແລະ ປະລິມານສະສົມແຮ່ທີ່ນຳເຂົ້າການຜະລິດ, ໄດ້ດຳເນີນການເຊັນສັນຍາກັບໜ່ວຍງານຂຸດເຈາະສຳຫລວດທີ່ມີຊື່ສຽງລະດັບສາກົນ ໄດ້ດຳເນີນການຂຸດເຈາະລວມໄດ້ບໍລິມາດ 60.000 ແມັດເຈາະ.

ໃນຕອນທ້າຍ, ທ່ານ ໄຊສົມພອນ ພົມວິຫານ ໄດ້ເນັ້ນໃຫ້ບໍລິສັດເອົາໃຈໃສ່ບາງບັນຫາເປັນຕົ້ນແມ່ນວຽກງານການປົກປັກຮັກສາສິ່ງແວດລ້ອມທຳມະຊາດເນື່ອງຈາກວ່າການລົງທຶນຂຸດຄົ້ນບໍ່ແຮ່ມີການນຳໃຊ້ເຕັກນິກເຕັກໂນໂລຊີທີ່ທັນສະໄໝເຊິ່ງອາດສົ່ງຜົນກະທົບຕໍ່ຄຸນນະພາບຂອງນ້ຳທີ່ປະຊາຊົນນຳໃຊ້ເຂົ້າໃນການດຳລົງຊີວິດປະຈຳວັນ ຖ້າການຂຸດຄົ້ນບໍ່ແຮ່ສົ່ງຜົນກະທົບຕໍ່ແມ່ນ້ຳລຳເຊ ກໍຂໍໃຫ້ບໍລິສັດຄົ້ນຄວ້າຊອກຫາວິທີການບຳບັດ ແລະ ວິທີການອື່ນທີ່ຈະເກີດຜົນກະທົບໜ້ອຍທີ່ສຸດ. ການຊົດເຊີຍຜົນກະທົບຕໍ່ບ່ອນຢູ່ອາໄສ, ທີ່ດິນທຳ, ການຜະລິດຂອງປະຊາຊົນຖ້າມີກໍໃຫ້ເອົາໃຈໃສ່ຄົ້ນຄວ້າຊອກຫາວິທີແກ້ໄຂຢ່າງເໝາະສົມ; ພ້ອມກັນນີ້, ການລົງທຶນຂຸດຄົ້ນບໍ່ແຮ່ເປັນການລົງທຶນທີ່ພໍ່ແມ່ປະຊາຊົນມີຄວາມສົນໃຈຫລາຍ ແລະ ເອົາໃຈໃສ່ຕິດຕາມການດຳເນີນໂຄງການ ໂດຍສະເພາະພໍ່ແມ່ປະຊາຊົນທີ່ອາໄສຢູ່ທ້ອງຖິ່ນທີ່ມີຄວາມຕິດພັນກັບຊັບສົມບັດດັ່ງກ່າວ,ສະນັ້ນ,ຈຶ່ງສະເໜີໃຫ້ບໍລິສັດເອົາໃຈໃສ່ປະຕິບັດໂຄງການລົງທຶນຕາມກົດໝາຍກຳນົດ; ເອົາໃຈໃສ່ການປະຕິບັດພັນທະຕາມກົດໝາຍກຳນົດ ກໍຄືໃຫ້ຮັບປະກັນ 3 ຜົນປະໂຫຍດ ເປັນຕົ້ນຜົນປະໂຫຍດລວມຂອງປະເທດຊາດ, ຜົນປະໂຫຍດຂອງຜູ້ລົງທຶນ ແລະ ຜົນປະໂຫຍດຂອງທ້ອງຖິ່ນ, ບ່ອນບໍ່ແຮ່ຕັ້ງຢູ່ກໍໃຫ້ໄດ້ຮັບການພັດທະນາ.ນອກຈາກນີ້, ການປະກອບສ່ວນຂອງຜູ້ລົງທຶນເຂົ້າໃນການພັດທະນາທ້ອງຖິ່ນເປັນແນວທາງນະໂຍບາຍທັງເປັນວຽກງານທີ່ສຳຄັນຫລາຍ, ໂຄງການລົງທຶນໄດ້ຮັບຜົນສຳເລັດ, ທ້ອງຖິ່ນກໍໄດ້ຮັບການພັດທະນາ ເພື່ອແກ້ໄຂບັນຫາຮ້ອງຂໍຕໍ່ວ່າຂອງປະຊາຊົນທີ່ດຳລົງຊີວິດຢູ່ຂອບເຂດດັ່ງກ່າວ ທັງເປັນການສ້າງຄວາມກົມກຽວລະຫວ່າງຜູ້ລົງທຶນ ແລະ ປະຊາຊົນ.

# ສຳພາດການປະເມີນ ການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ



(ສພຊ) ວັນທີ 3 ພຶດສະພາ 2022 ທີ່ສະພາປະຊາຊົນແຂວງບໍລິຄຳໄຊ, ທ່ານ ເປຄຳ ລໍຄຳສອນ ຮອງຫົວໜ້າກົມສື່ມວນຊົນ ສະພາແຫ່ງຊາດ ພ້ອມດ້ວຍທີມງານ ໄດ້ເຄື່ອນໄຫວຕິດຕາມກອດກາສຳພາດການປະເມີນກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ 4 ສະບັບຄື: ກົດໝາຍວ່າດ້ວຍແຮ່ທາດ; ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ; ກົດໝາຍວ່າດ້ວຍທີ່ດິນ; ກົດໝາຍວ່າດ້ວຍຊັບສິນຂອງລັດ ຢູ່ແຂວງບໍລິຄຳໄຊ ເຊິ່ງໄດ້ຮ່ວມເຮັດວຽກກັບທ່ານ ວິລັດ ສຸມີໄຊ ຮອງເລຂາທິການສະພາປະຊາຊົນແຂວງບໍລິຄຳໄຊ; ຈາກນັ້ນ, ໄດ້ເຂົ້າສຳພາດທ່ານ ສີສະຫວາດ ທັນທະບຸນ ປະທານຄະນະກຳມະການເສດຖະກິດແຜນການ ແລະ ການເງິນ ໃນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບດັ່ງກ່າວ.

ທັງນີ້, ເພື່ອໂຄສະນາເຜີຍແຜ່ການເຄື່ອນໄຫວຂອງອົງການນິຕິບັນຍັດ ໂດຍສະເພາະສະພາປະຊາຊົນຂັ້ນແຂວງ, ເພື່ອເປັນການເກັບກຳຂໍ້ມູນໃນການປັບປຸງກົດໝາຍ 4 ສະບັບດັ່ງກ່າວ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ເພື່ອສຳພາດກ່ຽວກັບການປະເມີນກ່ຽວກັບການຈັດຕັ້ງປະຕິບັດກົດໝາຍຢູ່ສະພາປະຊາຊົນຂັ້ນແຂວງ.

ໃນຕອນບ່າຍຂອງວັນດຽວກັນ, ຄະນະ ຍັງໄດ້ລົງພື້ນທີ່ຕົວຈິງຢູ່ເມືອງທ່າພະບາດ ໂດຍໄດ້ສຳພາດທ່ານນາຍບ້ານງຽ້ອຍເລີກ, ທ່ານຜູ້ຊ່ວຍອຳນວຍການໂຮງງານບໍລິຄຳໄຊອຸດສະຫະກຳຖ່ານຂາວ ຈຳກັດ ບ້ານໂພນສະຫວັນ ແລະ ທ່ານຮອງຫ້ອງການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງທ່າພະບາດ ແຂວງບໍລິຄຳໄຊ ເພື່ອເປັນການເກັບກຳຂໍ້ມູນການຈັດຕັ້ງປະຕິບັດກົດໝາຍໃນການປະຕິບັດວຽກງານຕົວຈິງ ວ່າມີຂໍ້ສະດວກຂໍ້, ຫຍຸ້ງຍາກຄືແນວໃດ ທັງເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດກົດໝາຍ ມີຄວາມສອດຄ່ອງ, ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ-ລັດ ແລະ ກົດໝາຍທີ່ວາງອອກ.

(ໂສລະຢ້ຳ ໄຊຍະວົງ)

## ຮັບຮູ້...

(1) ສ້າງ ແລະ ປະຕິບັດແຜນລາຍຈ່າຍງົບປະມານໃຫ້ຈະແຈ້ງ ແລະ ຊັດເຈນ ເປັນຕົ້ນການສ້າງແຜນຊຳລະໜີ້ສິນໂຄງການລົງທຶນຂອງລັດໃຫ້ລວມສູນ ໂດຍການປະສານສົມທົບລະຫວ່າງກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ທະນາຄານແຫ່ງ ສປປລາວ ໃນຊ່ວງໄລຍະການປະຕິບັດວາລະແຫ່ງຊາດ, ໄລຍະກາງ ແລະ ໄລຍະຍາວ, ດ້ວຍການກຳນົດແຫລ່ງທຶນຊຳລະໜີ້ສິນ ໂດຍສະເພາະຫລຸດຜ່ອນການກູ້ຢືມຈາກຕ່າງປະເທດເພື່ອຊຳລະໜີ້ສິນ, ສຳລັບໜີ້ສິນການລົງທຶນຕ່າງປະເທດໂດຍມີການເຈລະຈາ ຜ່ອນຜັນໜີ້ສິນຂອງສອງຝ່າຍ, ສ້າງແຜນການລົງທຶນຂອງລັດ ໃຫ້ສອດຄ່ອງກັບຄວາມສາມາດຕົວຈິງຂອງງົບປະມານລັດ ແລະ ໄປຕາມກົດໝາຍ: ແກ້ໄຂປາກົດການຫຍໍ້ທໍ້ ໃນລະບຽບການປະມູນ, ຈັດຊື້-ຈັດຈ້າງ ແລະ ການປະຢັດລາຍຈ່າຍບໍລິຫານ;

(2) ແກ້ໄຂຂໍ້ຄົງຄ້າງ ແລະ ອັດຊ່ອງຫວ່າງການຮົ່ວໄຫລຂອງລາຍຮັບຕາມຖານທີ່ມີແລ້ວ, ລາຍຮັບທີ່ເກັບບໍ່ທັນໄດ້ຄົບຖ້ວນ ເຊັ່ນ: ລາຍຮັບຈາກການສົ່ງອອກແຮ່ທາດ, ລາຍຮັບຈາກທີ່ດິນ, ຄ່າເຊົ່າສຳປະທານທີ່ດິນລັດ, ລາຍຮັບຈາກທຸລະກິດຊື້-ຂາຍອອນລາຍ ແລະ ອື່ນໆ, ສຳລັບການຂະຫຍາຍຖານລາຍຮັບໃໝ່ໃຫ້ເອົາໃຈໃສ່ການເບິ່ງພູດລາຍຮັບລະຫວ່າງຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ເພື່ອຮັບປະກັນບໍ່ໃຫ້ມີຂໍ້ຂັດແຍ່ງ ໃນການຈັດຕັ້ງປະຕິບັດ;

(3) ຍົກສູງປະສິດທິພາບການລົງທຶນຂອງລັດ ດ້ວຍການກວດກາ ແລະ ປະເມີນຄືນໂຄງການລົງທຶນຂອງລັດທີ່ກຳລັງຈັດຕັ້ງປະຕິບັດ, ສຸມທຶນໃສ່ໂຄງການສືບຕໍ່ທີ່ມີຄວາມສຳຄັນເປັນບູລິມະສິດທີ່ມີປະສິດທິຜົນ ແລະ ມີຜົນຕອບແທນສູງ, ຢຸດຕິໂຄງການທີ່ບໍ່ມີປະສິດທິຜົນ, ອີງໃສ່ຄວາມສາມາດຊຳລະສະສາງຕົວຈິງ ຂອງງົບປະມານ, ຄຸ້ມຄອງຫົວໜ່ວຍລາຄາກາງ, ມາດຕະຖານເຕັກນິກ, ມູນຄ່າລວມ ແລະ ກຳນົດການຊຳລະຂອງໂຄງການລົງທຶນຂອງລັດ ໃຫ້ໄປຕາມກົດໝາຍ, ສູ້ຊົນສ້າງຄວາມສະດວກໃນຂອດບໍລິການໃຫ້ແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດ;

(4) ປະຕິບັດວຽກຈຸດສຸມການຄຸ້ມຄອງເງິນຕາຕ່າງປະເທດ, ການຄຸ້ມຄອງອັດຕາແລກປ່ຽນ, ການຄຸ້ມຄອງລາຍຮັບເງິນຕາ ແລະ ຊຳລະສະສາງຜ່ານລະບົບທະນາຄານ ໃຫ້ສຳເລັດໂດຍໄວ ເພື່ອຮັບປະກັນແຫລ່ງເງິນຕາຊຳລະສະສາງກັບສາກົນ ຕາມພັນທະຜູກພັນກັບຄູ່ສັນຍາ;

(5)ເລັ່ງລັດປະຕິຮູບວິສາຫະກິດລັດ ທີ່ດຳເນີນທຸລະກິດບໍ່ມີປະສິດທິຜົນ ແລະ ຂາດທຶນຕໍ່ເນື່ອງ ດ້ວຍການປັບປຸງການບໍລິຫານ ແລະ ບຸກຄະລາກອນ ໃຫ້ມີປະສິດທິພາບ ແກ້ໄຂໜີ້ສິນໃຫ້ຫລຸດລົງ ແລະ ປັບປຸງຖານະການເງິນໃຫ້ສາມາດແຂ່ງຂັນທາງດ້ານທຸລະກິດ ເພື່ອກ້າວໄປສູ່ການມີກຳໄລ ແລະ ເປັນຕົວແບບໃນການປະຕິບັດພັນທະເຂົ້າງົບປະມານແຫ່ງລັດ;

(6) ກວດກາ ແລະ ປະເມີນຄືນ ການຈັດຕັ້ງປະຕິບັດບັນດາມາດຕະການກ່ຽວກັບການເຊົ່າ, ສຳປະທານທີ່ດິນ ເພື່ອດຳເນີນກິດຈະການຕ່າງໆ (ການປູກຝັງ, ການລ້ຽງສັດ, ຂຸດຄົ້ນບໍ່ແຮ່) ຕາມມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 25/ສພຊ, ລົງວັນທີ 19 ພະຈິກ 2019 ເປັນຕົ້ນ ໂຄງການທີ່ບໍ່ມີສັນຍາສຳປະທານ ການຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ໂດຍສະເພາະແຜນການຈັດສັນທີ່ດິນ ຂອງຂະແໜງການ ແລະ ທ້ອງຖິ່ນ;

(7) ຄົ້ນຄວ້າອອກນະໂຍບາຍ ແລະ ມາດຕະການຫລຸດຜ່ອນການນຳເຂົ້າກະແສໄຟຟ້າ ຈາກຕ່າງປະເທດ ເພື່ອຫລຸດຜ່ອນການຈ່າຍເງິນຕາຕ່າງປະເທດ, ສຸມພັດທະນາໂຄງການໄຟຟ້າ ທີ່ມີຄຸນນະພາບ, ມີຄວາມໝັ້ນຄົງ ເປັນຕົ້ນໂຄງການຜະລິດໄຟຟ້າພະລັງນ້ຳທີ່ມີອ່າງເກັບນ້ຳຂະໜາດໃຫຍ່, ໂຄງການໄຟຟ້າພະລັງງານທາງເລືອກ ເຊັ່ນ: ພະລັງງານລົມ, ແສງຕາເວັນ ແລະ ອື່ນໆ ຕິດພັນກັບການສ້າງລະບົບສາຍສົ່ງແຫ່ງຊາດ ໃຫ້ຄອບຄຸມໃນຂອບເຂດທົ່ວປະເທດ, ເອົາໃຈໃສ່ພິຈາລະນາລາຄາກະແສໄຟຟ້າ ທີ່ຊົມໃຊ້ພາຍໃນປະເທດຢ່າງສົມເຫດສົມຜົນ, ແນໃສ່ຮັບປະກັນການແກ້ໄຂຂໍ້ຫຍຸ້ງຍາກທາງດ້ານການດຳລົງຊີວິດຂອງປະຊາຊົນ;

(8) ການທົດລອງປະຕິບັດນະໂຍບາຍໃໝ່ ກ່ຽວກັບການຂຸດຄົ້ນແຮ່ເຫລັກ ໂດຍໃຫ້ກຳນົດເນື້ອທີ່ ແລະ ທີ່ຕັ້ງຂອງໂຄງການຢ່າງຈະແຈ້ງ, ຮັບປະກັນໃຫ້ມີຕະຫລາດຮອງຮັບຢ່າງແນ່ນອນ, ພາຍຫລັງສຳເລັດການຈັດຕັ້ງປະຕິບັດໄລຍະທົດລອງ 3 ປີ ໃຫ້ປະເມີນຜົນ ແລະ ສະຫລຸບລາຍງານຄືນການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ, ຖ້າເຫັນວ່າມີປະສິດທິຜົນ ແລະ ມີຄວາມຈຳເປັນສືບຕໍ່ ຕ້ອງໄດ້ປັບປຸງກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ ໃຫ້ສອດຄ່ອງ, ຮັບປະກັນບໍ່ໃຫ້ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ພ້ອມທັງມີມາດຕະການແກ້ໄຂແຕ່ຫົວທີ ໂດຍສະເພາະການຊົດເຊີຍ ແລະ ທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນປະຊາຊົນ ແລະ ການພັດທະນາອາຊີບໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ;

(9) ຍູ້ແຮງການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ໃຫ້ຫລາຍຂຶ້ນຕາມແລວທາງເສດຖະກິດ ເພື່ອເຊື່ອມຈອດພາຍໃນ ແລະ ພາກພື້ນ, ໂດຍສະເພາະ ເລັ່ງໃສ່ຊຸກຍູ້ການຜະລິດກະສິກຳທີ່ມີທ່າແຮງ ແລະ ຕະຫລາດຮອງຮັບ, ຟື້ນຟູ ແລະ ປັບປຸງ ໂຄງລ່າງພື້ນຖານການຜະລິດກະສິກຳ ໃຫ້ມີປະສິດທິພາບສູງ, ຍົກລະດັບສູນຄົ້ນຄວ້າ ແລະ ການສະຫລອງທຶນໃຫ້ແກ່ສູນບໍລິການເຕັກນິກກະສິກຳ ແນໃສ່ສະໜອງແນວພັນພືດ-ແນວພັນສັດ ແລະ ເຕັກນິກວິຊາການ ໃຫ້ແກ່ຜູ້ທຳການຜະລິດ ເພື່ອຫລຸດຜ່ອນຕົ້ນທຶນການຜະລິດເພີ່ມຜົນຜະລິດທີ່ມີຄຸນນະພາບ ແລະ ລາຄາ ທີ່ສາມາດແກ້ງແຍ້ງແຂ່ງຂັນກັບປະເທດອ້ອມຂ້າງແລະສາກົນ;

(10) ກຳນົດນະໂຍບາຍສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ຈະແຈ້ງ ແລະ ເປັນຮູບປະທຳຫລາຍຂຶ້ນ ເປັນຕົ້ນການເຂົ້າເຖິງແຫລ່ງທຶນດອກເບ້ຍຕ່ຳ, ການຊອກຕະຫລາດຈຳໜ່າຍ, ການສ້າງຕ່ອງໂສ້ການຜະລິດ ພ້ອມທັງການບໍລິການໃຫ້ຄຳປຶກສາດ້ານກົດໝາຍ ແລະ ວິຊາການ, ສ້າງຄວາມເຂັ້ມແຂງ ໃຫ້ຜູ້ປະກອບການໃໝ່ເພື່ອເປັນຖານລາຍຮັບທີ່ໝັ້ນຄົງ ຕາມທິດຫັນປ່ຽນຈາກສັງຄົມບໍລິໂພກ ໄປສູ່ສັງຄົມການຜະລິດ;

(11) ແກ້ໄຂບັນຫາການວ່າງງານ ໂດຍສະເພາະການສ້າງວຽກເຮັດງານທຳໃຫ້ແກ່ນັກສຶກສາທີ່ຮຽນຈົບການສຶກສາຂະແໜງການຕ່າງໆ, ແຮງງານພາຍໃນ, ແຮງງານທີ່ກັບຄືນຈາກຕ່າງປະເທດ ແລະ ຮັກສາກຳລັງແຮງງານໃນວິສາຫະກິດລັດໄລຍະການແຜ່ລະບາດພະຍາດໂຄວິດ-19 ໂດຍສົ່ງເສີມໃຫ້ມີການສືບຕໍ່ພັດທະນາວິຊາຊີບສີມືແຮງງານ ຕາມຄວາມຮຽກຮ້ອງຕ້ອງການຕະຫລາດແຮງງານໃນເງື່ອນໄຂວິຖີການດຳລົງຊີວິດແບບໃໝ່;

(12) ເອົາໃຈໃສ່ ສ້າງ ແລະ ປັບປຸງແຜນວຽກ, ແຜນຄົນ ແລະ ແຜນງົບປະມານ ທີ່ຕິດພັນກັບວາລະແຫ່ງຊາດ ໃຫ້ມີຄວາມສອດຄ່ອງ ແລະ ເປັນລະບົບ, ແບ່ງຂັ້ນຄຸ້ມຄອງ ແລະ ແບ່ງຄວາມຮັບຜິດຊອບ ລະຫວ່າງ ຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນໃຫ້ຈະແຈ້ງຕາມ

ອ່ານຕໍ່ສະບັບໜ້າ...

# ເມືອງເງິນ ແຂວງໄຊຍະບູລີ ໄດ້ຈັດພິທີປາຖະກະຖາ ທວນຄືນວັນກຳມະກອນສາກົນ

(ສພຊ) ວັນທີ 26 ເມສາ 2022 ທີ່ສະໂມສອນຂອງເມືອງເງິນ ແຂວງໄຊຍະບູລີ ໄດ້ມີພິທີປາຖະກະຖາລະນຶກວັນກຳມະກອນສາກົນ ຄົບຮອບ 136 ປີຂຶ້ນ ໂດຍການເປັນປະທານຂອງສະຫາຍ ສິທະນິນໄຊ ທອງເທພາ ຮອງເລຂາພັກເມືອງ, ຫົວໜ້າສະມາຊິກສະພາປະຊາຊົນປະຈຳເມືອງເງິນ, ປະທານກວດກາພັກ-ລັດເມືອງ; ມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າຫ້ອງການ, ດ່ານສາກົນນ້ຳເງິນ, ຄະນະບໍລິຫານງານສະຫະພັນກຳມະບານເມືອງ, ປະທານກຳມະບານຮາກຖານແລະສະມາຊິກກຳມະບານພ້ອມດ້ວຍກຳມະກອນອ້ອມຂ້າງເມືອງເຂົ້າຮ່ວມ.



ພິທີປາຖະກະຖາຄັ້ງນີ້ ສະຫາຍ ສິທະນິນໄຊ ທອງເທພາ ໄດ້ເລົ່າຄືນມູນເຊື້ອ, ປະຫວັດຄວາມເປັນມາຂອງວັນກຳມະກອນສາກົນ ຄົບຮອບ 136 ປີ (ວັນທີ 1 ພຶດສະພາ 1886-ວັນທີ 1 ພຶດສະພາ 2022) ເຊິ່ງທ່ານໄດ້ຍົກໃຫ້ເຫັນເຖິງຂະບວນການຕໍ່ສູ້ຂອງຊົນຊັ້ນກຳມະກອນສາກົນ ທີ່ຖືກພວກນາຍທຶນກົດຂີ່ຂູດຮີດແຮງງານຢ່າງໜັກໜ່ວງ, ຖືກບັງຄັບໃຫ້ອອກແຮງງານ 14-15 ຊົ່ວໂມງ/ມື້ ແລະ ໄດ້ຮັບຄ່າຕອບແທນແຮງງານຕ່ຳ, ບໍ່ໄດ້ຮັບການດູແລທາງດ້ານສະຫວັດດີການສັງຄົມ, ບໍ່ໄດ້ຮັບການສຶກສາຮ່ຳຮຽນ ແລະ ຍັງຖືກທຸບຕີທໍລະມານຈາກພວກນາຍທຶນ ເຮັດໃຫ້ກຳມະກອນ ແລະ ຊາວຜູ້ອອກແຮງງານສາກົນ ຈຶ່ງໄດ້ພ້ອມກັນລຸກຂຶ້ນຕໍ່ສູ້ຮຽກຮ້ອງທວງໃຫ້ພວກນາຍທຶນເພີ່ມເງິນເດືອນ ແລະ ຫລຸດຜ່ອນຊົ່ວໂມງເຮັດວຽກລົງ ໂດຍຮຽກຮ້ອງໃຫ້ນາຍທຶນຕ້ອງປະຕິບັດຕາມຄວາມຕ້ອງການ ໂດຍເຮັດວຽກບໍ່ໃຫ້ເກີນ 8 ຊົ່ວໂມງຕໍ່ມື້ 8 ຊົ່ວໂມງຕ້ອງພັກຜ່ອນ ແລະ 8 ຊົ່ວໂມງຮ່ຳຮຽນ. ພ້ອມນີ້, ຍັງໄດ້ຍົກໃຫ້ເຫັນເຖິງການປະກອບສ່ວນພາລະກິດປະຕິວັດ ຂອງກຳມະກອນລາວຕະຫລອດໄລຍະຜ່ານມາ.



ທັງນີ້ກໍເພື່ອເປັນການສຶກສາອົບຮົມໃຫ້ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫລວດ ຕະຫລອດຮອດສະມາຊິກກຳມະບານ ແລະ ກຳມະກອນຊາວຜູ້ອອກແຮງງານບັນດາເຜົ່າ ໄດ້ຮັບຮູ້ເຂົ້າໃຈ, ເຫັນໄດ້ຄວາມໝາຍ, ຄວາມສຳຄັນຂອງວັນກຳມະກອນສາກົນ, ພ້ອມກັນປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

(ສຸລິຍາ ແສງເດືອນ)

# ຄະນະເລຂາທິການ ສພຂ ອຸດົມໄຊ ສະຫລຸບການເຄື່ອນໄຫວວຽກງານ



(ສພຊ) ເພື່ອເປັນການສະຫລຸບຕີລາຄາຄືນກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໃນ 3 ເດືອນຕົ້ນປີ ແລະ ວາງທິດທາງແຜນການ 9 ເດືອນ ປີ 2022; ຕອນເຊົ້າຂອງວັນພຸດທີ 27 ເມສາ 2022 ຢູ່ທີ່ຫ້ອງປະຊຸມ ສພຂ ອຸດົມໄຊ, ຄະນະເລຂາທິການ ສພຂ ອຸດົມໄຊ ໄດ້ຈັດກອງປະຊຸມສະຫລຸບຕີລາຄາຄືນການເຄື່ອນໄຫວວຽກງານ ປະຈຳ 3 ເດືອນຕົ້ນປີ 2022 ໂດຍການເປັນປະທານຂອງທ່ານ ນາງ ວັນສີ ພວງມະໄລ ເລຂາທິການ ສພຂ; ມີຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນໄລຍະ 3 ເດືອນຜ່ານມາ ຄະນະເລຂາທິການ ສຂພ ໄດ້ເອົາໃຈໃສ່ໃນການນຳພາການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນຖານະເປັນເສນາທິການໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4 ແລະ ສະມາຊິກສະພາປະຊາຊົນແຂວງ, ໄດ້ເຮັດສຳເລັດວຽກງານໃນຫລາຍດ້ານຕາມການມອບໝາຍ ແລະ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຕາມລະບຽບການ, ລວມຊີວິດປະຈຳເດືອນ, ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນມີແນວຄິດອຸນອຽນທຸ່ນທ່ຽງ, ມີຄວາມສາມັກຄີໂດຍພື້ນຖານ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ຂັ້ນເທິງມອບໝາຍໃຫ້ ແລະ ເຮັດສຳເລັດຕາມແຜນການທີ່ວາງໄວ້.

ຈາກນັ້ນ, ກອງປະຊຸມໄດ້ເປີດກ້ວາງໃຫ້ຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນໃສ່ບົດສະຫລຸບດັ່ງກ່າວ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນ, ສົມບູນ, ສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ພ້ອມກັນນັ້ນ, ຍັງໄດ້ຖອດຖອນບົດຮຽນ, ຕຳນິສິ່ງຂ່າວເຊິ່ງກັນແລະກັນ ພາຍໃນຂະແໜງ ແລະ ບຸກຄົນທີ່ຖືກມອບໝາຍໃນການຈັດຕັ້ງປະຕິບັດວຽກງານ ໃຫ້ມີຄວາມຄ່ອງຕົວ, ມີຄວາມຖືກຕ້ອງສອດຄ່ອງຕາມລະບຽບການ ແລະ ກົດໝາຍ ກຳນົດໄວ້.

(ແສງພອນ ອິນນະລົງ)

# ສະຫະພັນແມ່ຍິງໜ່ວຍ ສພຂ ອຸດົມໄຊ ໄດ້ຮັບການຍ້ອງຍໍ

(ສພຊ) ວັນພະຫັດທີ 28 ເມສາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສະຫະພັນແມ່ຍິງໜ່ວຍ ສພຂ ໄດ້ມີພິທີມອບ-ຮັບໃບຍ້ອງຍໍຂອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ໂດຍຕາງໜ້າມອບໂດຍສະຫາຍ ນາງ ວັນສີ ພວງມະໄລ ຮອງເລຂາໜ່ວຍພັກ ເລຂາທິການ ສພຂ, ມີສະຫາຍ ນາງ ຄຳພອນ ພິມມະຈັນ ຮອງປະທານ ສພຂ, ສະຫາຍ ນາງ ວຽງສະໄໝ ປັນຍາຂັນ ປະທານສະຫະພັນແມ່ຍິງໜ່ວຍ ສພຂ, ຄະນະໜ່ວຍ ແລະ ສະມາຊິກແມ່ຍິງພາຍໃນໜ່ວຍ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.



ຄະນະຮັບຜິດຊອບໄດ້ຜ່ານຂໍ້ຕົກລົງຂອງສູນກາງສະຫະພັນແມ່ຍິງລາວ ສະບັບເລກທີ 029/ສສຍລ, ລົງວັນທີ 08 ກຸມພາ 2021 ວ່າດ້ວຍການຍ້ອງຍໍບຸກຄົນ ແລະ ກົມກອງລວມໝູ່ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ສະໄໝທີ VII (2016-2020) ຈຳນວນ 124,005 ໃບ ໃນທົ່ວປະເທດ ແລະ ໃນທົ່ວແຂວງອຸດົມໄຊ ໄດ້ຮັບທັງໝົດ 4,212 ໃບ ໃນນັ້ນ; ສະມາຊິກແມ່ຍິງພາຍໃນໜ່ວຍ ສພຂ ໄດ້ຮັບທັງໝົດ 9 ໃບ; ຈາກນັ້ນ, ຄະນະຮັບຜິດຊອບຜ່ານຂໍ້ຕົກລົງດັ່ງກ່າວແລ້ວ ໄດ້ຈັດພິທີມອບຢ່າງເປັນທາງການ.



ພ້ອມນັ້ນ, ສະຫະພັນແມ່ຍິງໜ່ວຍ ສພຂ ຍັງໄດ້ສະຫລຸບຕີລາຄາຄືນການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນໃນໄລຍະ 2 ເດືອນຜ່ານມາຄື: ເດືອນມີນາ, ເມສາ ແລະ ວາງທິດທາງແຜນການເຄື່ອນໄຫວໃນເດືອນພຶດສະພາຕື່ມອີກ.

(ແສງພອນ ອິນນະລົງ).

# ສພຂ ສາລະວັນ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ



(ສພຂ) ວັນທີ 3 ພຶດສະພາ 2022 ທີ່ຫ້ອງປະຊຸມສະໂມສອນແຂວງ, ສະພາປະຊາຊົນແຂວງສາລະວັນ ໄດ້ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຢູ່ແຂວງສາລະວັນ ໂດຍການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ປະທານສະພາປະຊາຊົນແຂວງ (ສພຂ). ມີບັນທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ເຂົ້າຮ່ວມ (ແບບວີດີໂອທາງໄກ), ຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ເຈົ້າເມືອງ 8 ເມືອງ ແລະພະແນກການ, ອົງການອ້ອມຂ້າງແຂວງ, ພະນັກງານລັດຖະກອນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການລາຍງານຈາກຕາງໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກແຜນການ ແລະ ການລົງທຶນ, ພະແນກການເງິນ, ພະແນກພະລັງງານ ແລະ ບໍ່ແຮ່ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ. ຈາກນັ້ນ ຜູ້ເຂົ້າຮ່ວມກອງ

ອ່ານຕໍ່ໜ້າ 5...

# ສະຫລຸບການເຄື່ອນໄຫວວຽກງານປະຈຳໄຕມາດ I ຂອງ ຄວສຜ ແລະ ຂວສຜ ອຸດົມໄຊ



(ສພຂ) ຕອນເຊົ້າຂອງວັນອັງຄານທີ 26 ເມສາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ສພຂ ໄດ້ເປີດກອງປະຊຸມສະຫລຸບການເຄື່ອນໄຫວປະຈຳໄຕມາດ I ຂອງຄະນະກຳມະການ ໂດຍການເປັນປະທານຂອງທ່ານ ນາງ ຄຳພອນ ພິມມະຈັນ ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4, ຮອງປະທານ ສພຂ ອຸດົມໄຊ, ຜູ້ຊີ້ນຳຂົງເຂດວຽກງານບັນດາເຜົ່າ; ເຂົ້າຮ່ວມມີທ່ານ ຄຳມະນີ ໄຊດວງຕາ ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4, ປະທານ ຄວສຜ, ມີຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການຂະແໜງກ່ຽວຂ້ອງ.

ກອງປະຊຸມຄັ້ງນີ້, ແມ່ນເພື່ອເປັນການສະຫລຸບຕີລາຄາຄືນກ່ຽວກັບຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງ ຄວສຜ ແລະຂະແໜງວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຂວສຜ) ສພຂ ປະຈຳໄຕມາດ I ແລະ ວາງທິດທາງແຜນການ ປະຈຳໄຕມາດ II ປີ 2022. ກອງປະຊຸມທ່ານທະນາກອນ ເຍມະນີ ຫົວໜ້າຂະແໜງວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ຜ່ານຮ່າງບົດສະຫລຸບຂອງ ຄວສຜ ແລະ ຂວສຜ ປະຈຳໄຕມາດ I ແລະ ທິດທາງແຜນການ ປະຈຳໄຕມາດ II ສະແດງໃຫ້ເຫັນການເຄື່ອນໄຫວວຽກງານສຳເລັດດັ່ງນີ້:

<u>ວຽກວິຊາສະເພາະ:</u> ໄດ້ກະກຽມບັນດາເອກະສານ, ຂໍ້ມູນເພື່ອເປີດກອງປະຊຸມຄົບຄະນະກຳມະການ ຄວສຜ ປະຈຳປີ 2021, ຄຳຖາມເຈາະຈີ້ມສົ່ງໃຫ້ພະແນກສາທາລະນະສຸກແຂວງ ທີ່ຈະຂຶ້ນລາຍງານໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II, ປະກອບຄຳເຫັນໃສ່ຮ່າງບົດລາຍງານແຫ່ງຊາດປະຈຳໄລຍະທີ 7 ຂອງຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ສົ່ງໃຫ້ສະຫະພັນແມ່ຍິງແຂວງ; ເຂົ້າຮ່ວມກອງປະຊຸມສະໄໝສາມັນສະພາປະຊາຊົນແຂວງ ຊຸດທີ II, ກອງປະຊຸມຄົບຄະນະກຳມະການ ຄວສຜ ປະຈຳປີ 2021 ແລະ ກອງຊຸມອື່ນໆ ໄດ້ 7 ຄັ້ງ, ສັງລວມບັນດາເອກະສານທີ່ຜ່ານຢູ່ໃນກອງປະຊຸມຄົບຄະນະກຳມະການ ຄວສຜ ປະຈຳປີ 2021 ເພື່ອເຮັດເປັນປຶ້ມໄວ້, ສຳເລັດບົດປະກອບຄຳເຫັນຕໍ່ກອງປະຊຸມຄົບຄະນະກຳມະການຂອງອົງການແນວລາວສ້າງຊາດແຂວງ ຄັ້ງທີ 3 ສະໄໝທີ 7 ໃຫ້ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການສູນກາງແນວລາວສ້າງຊາດ.

<u>ວຽກງານຮັບຄຳຮ້ອງທຸກ ແລະ ໂທລະສັບສາຍດ່ວນ:</u> ໄດ້ຮັບຄຳຮ້ອງທຸກ 1 ເລື່ອງ ແລະ ໂທລະສັບສາຍດ່ວນ 4 ເລື່ອງ ພ້ອມທັງຈັດສົ່ງຄຳຮ້ອງທຸກ ແລະ ໂທລະສັບສາຍດ່ວນ ໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ແກ້ໄຂຕາມພາລະບົດບາດ ຈຳນວນ 4 ເລື່ອງ.

<u>ວຽກງານຕິດຕາມກວດກາ:</u> ຕິດຕາມການເຄື່ອນໄຫວ, ຈັດຕັ້ງພາລະບົດບາດສິດ ແລະ ໜ້າທີ່ຂອງພະແນກການທີ່ກ່ຽວຂ້ອງດ້ວຍຮູບການຮັບບົດສະຫລຸບ, ບົດລາຍງານພາກສ່ວນທີ່ກ່ຽວຂ້ອງທີ່ຂຶ້ນກັບຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ເປັນປົກກະຕິ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ປະກອບຄຳເຫັນໃສ່ຮ່າງບົດສະຫລຸບດັ່ງກ່າວ ຢ່າງກົງໄປກົງມາ.

ພ້ອມດຽວກັນນັ້ນ, ກອງປະຊຸມຍັງຜ່ານຂໍ້ຕົກລົງຮ່ວມວ່າດ້ວຍການພົວພັນລະຫວ່າງຄະນະປະຈຳສະພາປະຊາຊົນແຂວງ ແລະຄະນະປະຈຳແນວລາວສ້າງຊາດແຂວງ, ຂໍ້ຕົກລົງຮ່ວມ ລະຫ່ວາງ ຄວສຜ ກັບພະແນກ ສາທາລະນະສຸກ, ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກສຶກສາທິການ ແລະ ກິລາ ພ້ອມທັງໄດ້ສືບຕໍ່ປະກອບຄຳຄິດຄຳເຫັນຕໍ່ຮ່າງຂໍ້ຕົກລົງຮ່ວມ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນ, ສົມບູນ, ສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

(ແສງພອນ ອິນນະລົງ)

ຕໍ່ຈາກໜ້າ 4...

ປະຊຸມ ໄດ້ແລກປ່ຽນ ປະກອບຄຳຄິດຄຳເຫັນ ຕໍ່ກັບການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ, ນິຕິກຳໃຕ້ກົດໝາຍ ຢ່າງກົງໄປກົງມາ ລົງເລິກໃສ່ບັນຫາຢ່າງຮອບດ້ານໃນການຈັດຕັ້ງປະຕິບັດຂັ້ນແຂວງແລະເມືອງ.

ກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບຄັ້ງນີ້ ເປັນກອງປະຊຸມທີ່ມີຄວາມໝາຍສຳຄັນ ໃນຂະບວນການສ້າງປັບປຸງ ແລະ ຈັດຕັ້ງປະຕິບັດກົດໝາຍ ຂອງສະພາແຫ່ງຊາດ ແລະລັດຖະບານ, ນິຕິກຳໃຕ້ກົດໝາຍ ຂອງແຂວງ ເຊິ່ງຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ; ທັງເປັນການສະຫລຸບຖອດຖອນບົດຮຽນ ໃຫ້ແກ່ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ຢູ່ໃນຂົງເຂດຕ່າງໆໃນຕໍ່ໜ້າ ແລະ ເພື່ອສັງລວມເປັນຂໍ້ມູນລາຍງານ ໃຫ້ຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ຈະລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາຮັບຮອງເອົາໃນຕໍ່ໜ້າ.

(ນາງ ຄັດສອນ ຮຸ່ງສະຫວ່າງ)

# ປາຖະກະຖາເລົ່າມູນເຊື້ອວັນກຳມະກອນສາກົນ



(ສພຊ) ວັນທີ 28 ເມສາ 2022 ທີ່ຫ້ອງປະຊຸມພະແນກຍຸຕິທຳແຂວງ, ໄດ້ຈັດພິທີປາຖະກະຖາເລົ່າມູນເຊື້ອວັນກຳມະກອນສາກົນ ຄົບຮອບ 136 ປີ (1 ພຶດສະພາ 1886-1 ພຶດສະພາ 2022) ໂດຍການເປັນປະທານຂອງສະຫາຍ ນາງ ຄຳພອນ ພິມມະຈັນ ຄະນະບໍລິຫານງານສະຫະພັນກຳມະບານແຂວງ, ປະທານສະຫະພັນກຳມະບານຮາກຖານ ສພຂ; ເຂົ້າຮ່ວມມີສະຫາຍ ລຽງ ພິມຍົງຄຳ ປະທານກຳມະບານຮາກຖານພະແນກແນກຍຸຕິທຳແຂວງ, ມີບັນດາສະຫາຍຄະນະກຳມະບານຮາກຖານ, ບັນດາສະຫາຍຄະນະປະຈຳສະພາປະຊາຊົນແຂວງ, ຄະນະນຳຂອງພະແນກຍຸຕິທຳແຂວງ, ສະມາຊິກກຳມະບານພາຍໃນຮາກຖານສະພາປະຊາຊົນແຂວງ ແລະ ພະແນກແນກຍຸຕິທຳແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີໄດ້ມີການທວນຄືນປະຫວັດການກຳເນີດ, ການເຕີບໃຫຍ່ຂອງຊົນຊັ້ນກຳມະກອນ ແລະ ເງື່ອນໄຂທີ່ພາໃຫ້ເກີດມີວັນກຳມະກອນສາກົນ ພາຍໃຕ້ການປົກຄອງຂອງພວກນາຍທຶນ, ຊົນຊັ້ນກຳມະກອນຖືກກົດຂີ່ຂູດຮີດນັບມື້ຍິ່ງໜັກໜ່ວງ ການອອກແຮງງານທີ່ລຳບາກ ແລະ ມີຄວາມສ່ຽງຕໍ່ຊີວິດ ເຮັດວຽກມື້ລະ 14-15 ຊົ່ວໂມງ ແຕ່ຄ່າແຮງງານພັດຕໍ່າ, ການປ້ອງກັນສຸຂະພາບ ແລະ ຄວາມປອດໄພແຮງງານໃນສະຖານທີ່ເຮັດວຽກບໍ່ດີ, ບໍ່ເອົາໃຈໃສ່ກ່ຽວກັບສະຫວັດດີການ-ສັງຄົມຈຶ່ງພາໃຫ້ເກີດມີຂໍ້ຂັດແຍ່ງຂຶ້ນ ແລະ ຂໍ້ຂັດແຍ່ງດັ່ງກ່າວນັບມື້ນັບຮຸນແຮງ, ຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານຈຳເປັນຈຶ່ງໄດ້ຈັດຕັ້ງເປັນກຸ່ມ, ເປັນຂະບວນລຸກຮື້ຂຶ້ນຕໍ່ສູ້ກັບຊົນຊັ້ນນາຍທຶນ, ທວງໃຫ້ພວກນາຍທຶນເພີ່ມເງິນເດືອນ ແລະ ຫລຸດຜ່ອນຊົ່ວໂມງເຮັດວຽກລົງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ.



ທ້າຍພິທີ ປະທານໄດ້ເນັ້ນໜັກ ໃຫ້ສະມາຊິກກຳມະບານພາຍໃນຮາກຖານສະພາປະຊາຊົນແຂວງ ແລະ ພະແນກແນກຍຸຕິທຳແຂວງ ນຳເອົາເນື້ອໃນຈິດໃຈຂອງການປາຖະກະຖາໃນຄັ້ງນີໄປຈັດຕັ້ງຜັນຂະຫຍາຍໃຫ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານວຽກງານຕົວຈິງໃຫ້ເກີດດອກອອກຜົນ.

(ແສງພອນ ອິນນະລົງ).

# ເຊກອງ ປະເມີນການຈັດຕັ້ງປະຕິບັດກົດໝາຍ



(ສພຊ)ວັນທີ 29 ເມສາ 2022 ທີ່ສະໂມສອນສະພາປະຊາຊົນແຂວງ (ສພຂ) ເຊກອງ ໄດ້ມີກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໂດຍການເປັນປະທານຂອງທ່ານ ດົງເພັດ ພະຍົນ ປະທານສະພາປະຊາຊົນແຂວງ, ມີຄະນະປະຈຳພັກແຂວງ, ຄະນະຈຳ ສພຂ, ສະມາຊິກສະພາແຫ່ງຊາດ-ສະມາຊິກສະພາປະຊາຊົນແຂວງ, ພະແນກການທີ່ກ່ຽວຂ້ອງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ທັງນີ້, ເພື່ອເປັນການທົບທວນຄືນກ່ຽວກັບການຈັດຕັ້ງປະຕິບັດກົດໝາຍໃນໄລຍະຜ່ານມາ ແລະ ເນັ້ນໜັກເຖິງການຄຸ້ມຄອງລັດ ແລະ ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ເຊິ່ງເປັນຄວາມຮຽກຮ້ອງຕ້ອງການຢ່າງພາວະວິໄສ ເລັ່ງດ່ວນ ແລະ ທວງໃຫ້ບັນດາອົງການແຫ່ງສິດອຳນາດລັດ ເພີ່ມທະວີໃນການສ້າງນິຕິກຳໃນການປົກຄອງຕາມກົດໝາຍໃຫ້ມີຄວາມສັກສິດ ແລະ ເຂັ້ມງວດ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກ, ຊຸກຍູ້ສົ່ງເສີມນັກລົງທຶນພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນາປະເທດຊາດ ກໍຄືແຂວງເຊກອງໃນຊຸມປີຕໍ່ໜ້າ ຕາມທິດຍືນຍົງ ແລະ ທິດສີຂຽວ.

ໃນກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ 4 ສະບັບຈາກພະແນກການທີ່ກ່ຽວຂ້ອງຂອງແຂວງຄື: ພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມແຂວງ ລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ; ພະແນກແຜນການ ແລະ ການລົງທຶນແຂວງ ລາຍງານກ່ຽວກັບການຈັດຕັ້ງປະຕິບັບກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ; ພະແນກການເງິນແຂວງ ລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮ່ທາດ.

ຈາກນັ້ນບັນດາຜູ້ແທນກອງປະຊຸມກໍໄດ້ພ້ອມກັນປະກອບຄຳຄິດຄຳເຫັນ ເພື່ອແລກປ່ຽນຖອດຖອນບົດຮຽນເຊິ່ງກັນແລະກັນໃສ່ກົດໝາຍດັ່ງກ່າວຕາມຄຳເຈາະຈີ້ມຢ່າງມີຈຸດສຸມ.





## ສຸຂະພາບກາຍໃຈ

# ວິຕາມິນທີ່ຈໍາເປັນແຕ່ລະຊ່ວງອາຍຸ

# ສາວແວ່ນ



**ເນື່ອງຈາກແຕ່ລະຄົນມີ** ຄວາມຕ້ອງການສານອາຫານທີ່ແຕກຕ່າງກັນ ຮ່າງກາຍມີສະພາບຂາດວິຕາມິນ ຫລື ບາງແຮ່ທາດທີ່ສໍາຄັນໄປໂດຍບໍ່ຮູ້ຕົວ (Hidden Hunger) ອາດຈະເປັນຍ້ອນວິຖີຊີວິດທີ່ເລັ່ງດ່ວນ, ການກິນອາຫານທີ່ບໍ່ຫລາກຫລາຍ ຮ່າງກາຍຈຶ່ງໄດ້ຮັບສານອາຫານທີ່ບໍ່ພຽງພໍ ເຮັດໃຫ້ພົບກັບບັນຫາການຂາດສານອາຫານ; ການກິນອາຫານເສີມຈຶ່ງກາຍເປັນທີ່ນິຍົມຫລາຍຂຶ້ນໃນປັດຈຸບັນ ແຕ່ພວກເຮົາຮູ້ໄດ້ແນວໃດວ່າອາຫານເສີມທີ່ກິນເໝາະກັບພວກເຮົາແລ້ວບໍ? ເພາະແຕ່ລະຄົນມີຄວາມຕ້ອງການດ້ານໂພຊະນາການທີ່ແຕກຕ່າງກັນຄືຈະເປັນການດີຖ້າຮູ້ວ່າຮ່າງກາຍຂາດວິຕາມິນ ຫລື ແຮ່ທາດຊະນິດໃດແດ່? ເພື່ອຫລຸດຜ່ອນອັນຕະລາຍຈາກການໄດ້ຮັບສິ່ງດັ່ງກ່າວເກີນຂະໜາດ ຫລື ຄວາມຕ້ອງການທີ່ບໍ່ເໝາະສົມ; ໃນຄໍລໍາສຸກສະບາຍຫາຍໂລຄາສະບັບນີ້ ເຮົາມີການກິນວິຕາມິນທີ່ຈໍາເປັນສໍາລັບແຕ່ລະກຸ່ມອາຍຸມານໍາສະເໜີໃຫ້ແກ່ບັນທ່ານໄດ້ຮັບຮູ້ນໍາກັນ

- ອາຍຸຕໍ່າກວ່າ 20 ປີ ເປັນໄລຍະທີ່ຮ່າງກາຍຈະເລີນເຕີບໂຕ ດັ່ງນັ້ນ, ຈຶ່ງຕ້ອງການສານອາຫານທີ່ຊ່ວຍໃນການເສີມສ້າງ ເຊັ່ນ: ແຄວຊຽມ ເພື່ອຊ່ວຍເສີມສ້າງມວນກະດູກ, ທາດເຫລັກ ຊ່ວຍສ້າງເມັດເລືອດແດງ ປ້ອງກັນພະຍາດເລືອດຈາງ, ໂອເມກ້າ 3 (Omega-3) ຊ່ວຍເສີມສ້າງສະມາທິ ແລະ ຄວາມຈື່ຈໍາ.

- ອາຍຸລະຫວ່າງ 20-40 ປີ ຫລືເປັນໄລຍະເຮັດວຽກເປັນໄລຍະທີ່ຈະມີຄວາມເມື່ອຍຈາກການເຮັດວຽກ ຄວນກິນວິຕາມິນທີ່ຊ່ວຍເພີ່ມພະລັງງານ, ບໍາລຸງລະບົບປະສາດ, ເສີມສ້າງລະບົບພູມຕ້ານທານ ເຊັ່ນ: ວິຕາມິນບີລວມ, ວິຕາມິນຊີ, ໂຄເອັນຄິວເທັນ (coenzyme Q10).

- ອາຍຸ 40 ປີຂຶ້ນໄປ ເປັນໄລຍະທີ່ການເຮັດວຽກຂອງຮ່າງກາຍເລີ່ມຫລຸດລົງ ຫລື ເສື່ອມລົງ ກະດູກເລີ່ມບາງລົງ ຜິວໜັງເລີ່ມຫ່ຽວແຫ້ງ ການເຮັດວຽກຂອງອະໄວຍະວະຕ່າງໆ ເລີ່ມບໍ່ດີຄືເກົ່າ ຈຶ່ງຕ້ອງການສານອາຫານເພີ່ມຂຶ້ນ ເຊັ່ນ: ວິຕາມິນບີລວມ, ວິຕາມິນຊີ, ວິຕາມິນດີ, ທາດແຄວຊຽມ, ໂຄເອັນຄິວເທັນ (coenzyme Q10).

**www.sanook.com**

## ສາລາກະວີ

# ຝາກເຖິງລູກ

# ສາວຖຸ ວົງຄັກລິ້ນ

* ກອນນີ້ ຂຽນຈາກຜູ້ ງອຍຢູ່ຖຽງນາ
ທຸກວັນຄະນຶງຫາ ບຸດຕາດວງແກ້ວ
ຫລາຍປີແນວນານຫລ້າ ຮຽນວິຊາໃນເມືອງໃຫຍ່
ຫວັງໃຫ້ດີເດັ່ນກ້າວ ທາງບ້ານໄດ້ເພິ່ງພິງ ນັ້ນນາ!

* ພໍ່ຈຶ່ງ ສຸມໃສ່ສ້າງ ນາໄຮ່ທັງສວນ
ຊອກຄວາຫາເງິນຄໍາ ຍົ່ນຍໍຍັງເຈົ້າ
ມີເທົ່າໃດກໍພຽນທ້ອນ ໂຮມໄປຝາກສົ່ງ
ໃຫ້ອານຶງນາດນ້ອງ ນາງຫລ້າຮໍ່າຮຽນ ນັ້ນແລ້ວ!

* ຍາມນີ້ ແມ່ຟັ່ງຟ້າວ ລົງສູ່ການນາ
ກ່ຽວເຂົ້າດໍພວມເຫລືອງ ເຮື່ອເຮືອງງາມລົ້ນ
ພໍ່ພວມຂົນຮວງເຂົ້າ ກອງກັນເປັນຍ່ານ
ເຫື່ອໄຫລຊຶມຜ່ານແກ້ມ ຍັງຍິ້ມບໍ່ຫວັ່ນໄຫວ

* ຂໍພຽງ ເຫັນລູກນັ້ນ ກິນອີ່ມມີແຮງ
ຮຸ່ງເຮືອງແສງປັນຍາ ດັ່ງໃຈປະສົງໄວ້
ພໍ່ແມ່ ຍິນຍອມໃຫ້ ຕາມໃຈໝົດທຸກຢ່າງ
ແມ່ນວ່າ ທົນຫອດທ້ອງ ພະໄນນີ້ແມ່ຊິທົນ ລູກເອີຍ!

* ແມ່ນີ້ ແສນຫ່ວງເຈົ້າ ອອນອ່ອນຄໍາແພງ
ຫ່ວງແກ້ມແດງດວງຕາ ທຸກຄືນບໍ່ວາງເວັ້ນ
ຂໍໃຫ້ ເປັນຄົນຮູ້ ນີໄສດີງາມປະເສີດ
ໃຫ້ຜູ້ບັງເກີດເກົ້າ ຊິມຊ້ອຍຊື່ນສະອອນ ນັ້ນທ້ອນ!

* ຂໍໃຫ້ ລູກຕໍ່ຕັ້ງ ສະແຫວງໃສ່ຕໍາລາ
ຟັງວາຈາຂອງຄູ ສິດສອນແລງເຊົ້າ
ຢ່າໄດ້ເມົາມົວເຊື້ ແສງສີເຮືອງຮຸ່ງ
ຂໍໃຫ້ ໃຈມຸ່ງໝັ້ນ ປະລິນຍານັ້ນສູ່ຕົນ ລູກເອີຍ!

# ເບີໂທສຸກເສີນ

❑ **ຕໍາຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕໍາຫລວດສືບສວນ-ສອບສວນ 021 970093
- ກົມຕໍາຫລວດປ້ອງກັນຢາເສບຕິດ 021 217258
- ກົມຕໍາຫລວດເສດຖະກິດ 021 212519
- ກົມຕໍາຫລວດຈະລາຈອນ 021 900927
- ກົມຕໍາຫລວດສະກັດກັ້ນ ແລະຕ້ານການຄ້າມະນຸດ 021 970543
- ກົມຕໍາຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

❑ **ໜ່ວຍກູ້ໄພ**

- ສະມາຄົມອາສາກູ້ໄພນະຄອນຫລວງ 1624
- ໜ່ວຍກູ້ໄພມູນນິທິຊ່ວຍເຫລືອຄົນທຸກຍາກ 1623
- ໜ່ວຍຊ່ວຍເຫລືອຜູ້ປະສົບໄພ ອົງການກາແດງ 1625



## ທັກທາຍ ລະບາຍ

# ສຽມທ້ຽນ

**(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)**

* ***ຢາກ****ພັດທະນາຊາດ ຕ້ອງພັດທະນາຄົນ... ພົບການສອບເສັງ* ***ນັກຮຽນເກັ່ງຊັ້ນມັດທະຍົມລະດັບຊາດ*** *ໃນຮູບແບບອອນລາຍ ໄດ້ສໍາເລັດຢ່າງເປັນທາງການເມື່ອອາທິດຜ່ານມາເປັນການຍົກໃຫ້ເຫັນວ່າ* ***ໂຄວິດ-19 ບໍ່ແມ່ນອຸປະສັກ*** *ຈຶ່ງຂໍຊົມເຊີຍນໍາ ຂະແໜງການສຶກສາ ທີ່ຊອກຫາວິທີທາງ ເພື່ອສະໜັບສະໜູນໃຫ້ ນ້ອງນັກຮຽນຜູ້ທີ່ມີຄວາມສາມາດໄດ້ ມີເວທີສະແດງອອກ ເພາະຊາດຍັງຮຽກຮ້ອງ ຄົນກ້າເກັ່ງພັດທະນາ* ***ນັ້ນແລ້ວ!***

* ***ຊົມ****ເຊີຍນັກຂຽນ-ນັກປະພັນ ຜູ້ທີ່ໄດ້ຮັບລາງວັນຊະນະເລີດປະຈໍາປີ 2021 ໂດຍໄດ້ປະກາດຜົນຢ່າງເປັນທາງການ ໃນອາທິດຜ່ານມາ ຜູ້ຊະນະເລີດລາງວັນ* ***ຊີໄຣ*** *ໄດ້ແກ່* ***ທິບພະພາສອນ ດວງຈັກ*** *ຈາກປຶ້ມ* ***"ຮັກນັ້ນບໍ່ລັບດອນ"*** *ແລະ ລາງວັນແມ່ນໍ້າຂອງ ຄອງແຊ້ມໂດຍ* ***ຄໍາສີ ຈັນທະວີທອງ*** *ຈາກປຶ້ມ* ***"ທອບຄືນເສັ້ນທາງຊີວິດ"*** *ຕາມຕິດມາແມ່ນ* ***ແທຍງ ພິລາກອນ****ໃນບົດເລື່ອງສັ້ນ* ***"ອາວທະຫານ"*** *ສາວຈົ່ມຂໍຊົມຊື່ນຍ້ອງ ເພື່ອນຮ່ວມອຸດົມການ ນັກຂຽນເບີ! ຂໍໃຫ້ມີຜົນງານ ຫລັ່ງໄຫລຫລາຍລົ້ນ ທັງສາມຄົນໂດຍດ້ານ ຜົນງານໂດດເດັ່ນ ເປັນແວ່ນແຍງຊ່ອຍໃຫ້ ນັກຂຽນນ້ອງແນມສ່ອງ* ***ນັ້ນແລ້ວ!***

* ***ອາລົບ*** *ສຸພິມມະປະດິດ* ***ສາວສີ່ມີສິບ*** *ເຈົ້າຂອງນາມປາກກາ* ***ສາວແວ່ນມ ສຽມທ້ຽນ...*** *ແລະອີກຫລາຍໆນາມປາກກາ ໄດ້ລາອົງການຊໍ່ຄາວ ຈາກການເປັນສາວຊ່ໍາຕາກ້ອງ ເພາະຕ້ອງໄປສຶກສາຕໍ່ຢູ່ຕ່າງແດນ ຍິນດີນໍານ້ອງຫລ້າ ສາວຊ່ໍາມີສິບ ເຮົາເບີ! ໄປຕ່າງແດນຫລາຍປີ ຫາກເມື່ອໃດເສັດສິ້ນ ພາລະກິດໃຫ້ຮີບໄວອາຟ້າວ ທອບຄືນກັບຕ່າວ ມາເປັນສາວແບກກ້ອງໃຫ້ຜູ້ແທນຍົກຍ້ອງປະດັບເອັ່ນອນປະຊຸມ* ***ນັ້ນແລ້ວ!***

### ຊວນຍິ້ມ

# ແອ່ນຕຸ້ງ

**ເລື່ອງ: ຄວາມໃນໃຈຂອງນັກຂຽນ**

ທິດເລີດ ແລະ ຊຽງແອ່ນ ສອງສ່ຽວລົມກັນ

**ທິດເລີດ:** ເປັນນັກຂຽນມາສິບປາຍປີ ບໍ່ເຄີຍມີໃຜສົນໃຈຜົນງານກູ ມານີ້ ບໍ່ມີຄົນອ່ານຢ່າງໃຈຈົດໃຈຈໍ່

**ຊຽງແອ່ນ:** ມຶງຂຽນນິຍາຍເລື່ອງໃໝ່ຫວາ?

**ທິດເລີດ:** ບໍ່ ກູຂຽນລາຍການອາຫານ ແລະ ເຄື່ອງດື່ມ ເພາະກູເປີດຮ້ານໃໝ່

**ຊຽງແອ່ນ:** !!!



### ຄະຕິເຕືອນໃຈ

# ດອກແຄ

ຢ່າຊຸຄຸຍອວດອ້າງ ຕົນເກ່ງເກີນໃຜ ທ່ານເອີຍ
ລາງເທື່ອບາງຄົນເຂົາ ເກ່ງເກີນຫລາຍເທົ້າ
ເຮົາວ່າເຮົາກະດັກ ເຂົາພັດແຮງກະດໍ້
ເຮົາວ່າບົ່ງຢ່ອງຍໍ້ ເຂົາຊໍ້າພັດບົ່ງຕໍ່ ໃດເດີ!

# ຫວຽດນາມ ຮຽກຮ້ອງໃຫ້ ພົນລະເມືອງ 95% ເຂົ້າຮ່ວມ ການປະກັນສຸຂະພາບໃນປີ 2025

ບັນດາທ້ອງຖິ່ນທີ່ຕ້ອງບັນລຸຫລາຍກວ່າ 90% ໃນປີ 2022 ລວມມີ: ຮ່າໂນ້ຍ, ນະຄອນ ໂຮ່ຈິມິນ, ອານຢາງ, ບ່າເຣີຍ-ວູງເຕົ່າ ທ່ານນາຍົກລັດຖະມົນຕີ ຫວຽດນາມ ຟາມ ມິນ ຈິງ ຫາກໍ່ຊີ້ນຳຮຽກຮ້ອງບັນດາທ້ອງຖິ່ນໃຫ້ພົນລະເມືອງ 95% ເຂົ້າຮ່ວມການປະກັນສຸຂະພາບໃນປີ 2025. ໃນຈຳນວນນີ້, ບັນດາທ້ອງຖິ່ນທີ່ຕ້ອງບັນລຸຫລາຍກວ່າ 90% ໃນປີ 2022 ລວມມີ: ຮ່າໂນ້ຍ, ນະຄອນ ໂຮ່ຈິມິນ, ອານຢາງ, ບ່າເຣີຍ-ວູງເຕົ່າ ຄອບຄົວໃກ້ລະດັບທຸກຍາກ, ທຸກຍາກຫລາຍດ້ານ ຈະໄດ້ຮັບການໜູນຊ່ວຍກ່ຽວກັບການປະກັນສຸຂະພາບ, ດ້ວຍເປົ້າໝາຍແມ່ນທຸກຄົນລ້ວນແຕ່ໄດ້ເຂົ້າຮ່ວມ. ທ່ານນາຍົກລັດຖະມົນຕີ ຮຽກຮ້ອງໃຫ້ກະຊວງສຶກສາ ແລະ ບຳລຸງສ້າງ ຫວຽດນາມ ຮັບປະກັນວ່າ ນັກຮຽນ, ນັກສຶກສາໝົດທຸກຄົນໄດ້ເຂົ້າຮ່ວມປະກັນສຸຂະພາບປີ 2023. ກະຊວງສາທາລະນະສຸກຊີ້ນຳຮາກຖານກວດ, ປິ່ນປົວພະຍາດຍົກສູງຄຸນນະພາບການກວດ, ປິ່ນປົວພະຍາດ, ທ່າທີຮັບໃຊ້ຜູ້ເຂົ້າຮ່ວມການປະກັນສຸຂະພາບ; ດັດປັບຂັ້ນຕອນການຊຳລະ, ກວດປິ່ນປົວພະຍາດດ້ວຍບັດປະກັນສຸຂະພາບ, ສ້າງຄວາມສະດວກໃຫ້ແກ່ປະຊາຊົນ.

ປັດຈຸບັນ, ຫວຽດນາມ ມີພົນລະເມືອງເຂົ້າຮ່ວມການປະກັນສຸຂະພາບ 91% ແລ້ວ. ດ້ວຍເປົ້າໝາຍດັ່ງກ່າວ, ນັບແຕ່ນີ້ຮອດປີ 2025, ຈະມີພົນລະເມືອງ 4% ເຂົ້າຮ່ວມການປະກັນສຸຂະພາບຕື່ມອີກ.

**ແຫລ່ງຂ່າວ: Vovworld ວິທະຍຸກະຈ່າຍສຽງຫວຽດນາມອອນລາຍ ວັນທີ 1 ພຶດສະພາ 2022**






# ວັນກຳມະກອນສາກົນ ວັນທີ 1 ພຶດສະພາ

ວັນກຳມະກອນສາກົນ ວັນທີ 1 ພຶດສະພາ: ເພື່ອໃຫ້ຜູ້ອອກແຮງງານບໍ່ຖືກປະໄວ້ຢູ່ເບື້ອງຫລັງ ພາຍຫລັງໂລກລະບາດໂຄວິດ - 19.

ນັບແຕ່ຕົ້ນປີ 2020 ມາຮອດປັດຈຸບັນ, ພາຍຫລັງກວ່າສອງປີທີ່ໂລກຖືກປິ້ນຂວ້ຳຍ້ອນໂຄວິດ-19, ອາດຈະເຫັນໄດ້ວ່າໂລກລະບາດ ໄດ້ສົ່ງຜົນກະທົບຕໍ່ທຸກດ້ານຂອງຊີວິດເສດຖະກິດ ແລະ ສັງຄົມຂອງທຸກໆຄົນ,ອັນໄດ້ເຮັດໃຫ້ພື້ນຖານເສດຖະກິດຂອງໂລກ ຖືກຕົກເຂົ້າສູ່ເຂົ້າທ່າຊຸດໂຊມ ແລະ ອັດຕາການວ່າງງານເພີ່ມຂຶ້ນສູງທີ່ສຸດແຕ່ລະປີ ວັນກຳມະກອນສາກົນ ວັນທີ 1 ພຶດສະພາ ແມ່ນເຫດການສະເຫລີມສະຫລອງວັນກະທຳຂອງຂະບວນການກຳມະກອນສາກົນ ແລະ ຂອງຜູ້ອອກແຮງງານໃນທົ່ວໂລກ, ດ້ວຍການເຄື່ອນໄຫວຫລາຍຢ່າງຖືກຈັດຂຶ້ນ ເພື່ອເຊີດຊູບັນດາຜູ້ມີຄວາມມານະພະຍາຍາມພັດທະນາເສດຖະກິດແຫ່ງຊາດ. ແຕ່ວ່ານັບແຕ່ຕົ້ນປີ 2020 ມາຮອດປັດຈຸບັນ, ພາຍຫລັງກວ່າສອງປີທີ່ໂລກຖືກປິ້ນຂວ້ຳຍ້ອນໂຄວິດ-19, ອາດຈະເຫັນໄດ້ວ່າໂລກລະບາດ ໄດ້ສົ່ງຜົນກະທົບຕໍ່ທຸກດ້ານຂອງຊີວິດເສດຖະກິດແລະສັງຄົມຂອງທຸກໆຄົນ,ອັນໄດ້ເຮັດໃຫ້ພື້ນຖານເສດຖະກິດຂອງໂລກ ຖືກຕົກເຂົ້າສູ່ເຂົ້າທ່າຊຸດໂຊມ ແລະ ອັດຕາການວ່າງງານເພີ່ມຂຶ້ນສູງທີ່ສຸດ.

ໃນບົດລາຍງານ "ແງ່ຫວັງຂອງວຽກເຮັດງານທຳ ແລະ ສັງຄົມໃນໂລກ" ທີ່ປະກາດໃນຕົ້ນປີນີ້, ອົງການແຮງງານສາກົນ ຫລື ILO ໄດ້ໃຫ້ຂໍ້ສັງເກດວ່າ ວິກິດການພະຍາດໂຄວິດ-19 ໄດ້ສືບຕໍ່ກໍ່ໃຫ້ເກີດສະພາບຂາດວຽກເຮັດງານທຳຢ່າງຮ້າຍແຮງໃນທົ່ວໂລກ ພ້ອມກ່າວເຕືອນວ່າອາດຈະໃຊ້ເວລາເຖິງສອງສາມປີ ເພື່ອໃຫ້ລະດັບຮັບສະໝັກຜູ້ເຂົ້າເຮັດວຽກກັບຄືນສູ່ຄືໄລຍະກ່ອນໂລກລະບາດ.

ເພາະສະນັ້ນ ວຽກງານທີ່ຕ້ອງເຮັດໃນທັນທີຂອງບັນດາລັດຖະບານ ແມ່ນບໍ່ພຽງແຕ່ຕ້ານໂລກລະບາດ ແລະ ຟື້ນຟູເສດຖະກິດເທົ່ານັ້ນ ຫາກຍັງຕ້ອງສະຫງວນແຫລ່ງງົບປະມານທີ່ເໝາະສົມ ເພື່ອຮັບປະກັນການຊ່ວຍໜູນສັງຄົມໃຫ້ແກ່ຜູ້ອອກແຮງງານ ເພື່ອຊ່ວຍໃຫ້ເຂົາເຈົ້າກັບຄືນສູ່ການເຊື່ອມໂຍງຕະຫລາດແຮງງານໂດຍໄວ.

**ແຫລ່ງຂ່າວ: Vovworld ວິທະຍຸກະຈ່າຍສຽງຫວຽດນາມອອນລາຍ ວັນທີ 1 ພຶດສະພາ 2022**






# ກົດໝາຍວ່າດ້ວຍການຟື້ນຟູ ແລະການລົ້ມລະລາຍຂອງວິສາຫະກິດ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 51 ສິດ ແລະ ໜ້າທີ່ຂອງຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ,ນະຄອນ**

ໃນການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

3. ຄົ້ນຄວ້າ ສະເໜີຕໍ່ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ເພື່ອພິຈາລະ ນາອອກ ຫຼື ຖອນໃບອະນຸຍາດ, ຢັ້ງຢືນ ແລະ ຮັບຮອງການດຳເນີນວຽກງານເຕັກໂນໂລຊີລະດັບສູງ;

4. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

5.ເກັບກຳແລະບັນທຶກຂໍ້ມູນກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

6. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

7. ປະສານສົມທົບກັບຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານເຕັກໂນໂລຊີລະດັບສູງ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານເຕັກໂນໂລຊີລະດັບສູງ ໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດແລະປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 ສິດ ແລະ ໜ້າທີ່ຂອງຂະແໜງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ຂະແໜງການ, ພາກສ່ວນອື່ນ ແລະ ອົງການປົກ ຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ປະຕິບັດວຽກງານ ເຕັກໂນໂລຊີລະດັບສູງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບຂະແໜງການເຕັກໂນໂລຊີ ແລະ ການສື່ສານ.

## ໝວດທີ 2
## ການກວດກາວຽກງານເຕັກໂນໂລຊີລະດັບສູງ

**ມາດຕາ 53 ອົງການກວດກາ ວຽກງານເຕັກໂນໂລຊີລະດັບສູງ**

ອົງການກວດກາວຽກງານເຕັກໂນໂລຊີລະດັບສູງ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 54 ເນື້ອໃນການກວດກາ**

ການກວດກາ ວຽກງານເຕັກໂນໂລຊີລະດັບສູງ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ;

2. ແຜນການ, ແຜນງານ ແລະ ໂຄງການກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

3. ການເຄື່ອນໄຫວວຽກງານຂອງ ອົງການຄຸ້ມຄອງວຽກງານ ເຕັກໂນໂລຊີລະດັບສູງ ແລະ ພະນັກ ງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ**
**ຍານພາຫະນະທາງບົກ**

3. ຊີໂອພີ (Conformity of Production-COP) ໝາຍເຖິງ ການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຂະບວນການຜະລິດ;

4. ເລກຈັກ ໝາຍເຖິງ ຕົວເລກ ຫລື ລະຫັດປະຈຳໜ່ວຍຈັກ;

5. ເລກຖັງລົດ (Vehicle Identification Number-VIN) ໝາຍເຖິງ ລະຫັດຂອງຍານພາຫະນະທີ່ບົ່ງບອກ ປະເທດຜະລິດ, ຍີ່ຫໍ້, ປະເພດ, ປີຜະລິດ ແລະ ລຳດັບການຜະລິດ ຂອງຍານພາຫະນະ ຕາມມາດຕະຖານສາກົນ;







**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກິງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ